# ພົບກັບຈີນ ທີ່ເມືອງຈິ່ງເຕີເຈີນ

ໃນວັນທີ 25 ກໍລະກົດ 2026, ໃນກອງປະຊຸມມໍຣະດົກໂລກຄັ້ງທີ 48 ທີ່ຈັດຕັ້ງໂດຍອົງການ UNESCO ທີ່ເມືອງປູຊານ, ສ. ເກົາຫຼີ, ໂຄງການ “ມໍຣະດົກອຸດສາຫະກຳເຄື່ອງປັ້ນດິນເຜົາ ທີ່ເຮັດດ້ວຍມື ຈິ່ງເຕີເຈີນ” ທີ່ສະເໜີໂດຍປະເທດຈີນ ໄດ້ຮັບການອະນຸມັດ ແລະ ຂຶ້ນທະບຽນເຂົ້າໃນບັນຊີລາຍຊື່ມໍຣະດົກໂລກຢ່າງສຳເລັດຜົນ. ເຮັດໃຫ້ຈຳນວນມໍຣະດົກໂລກທັງໝົດ ໃນປະເທດຈີນ ເພີ່ມຂຶ້ນເປັນ 61 ແຫ່ງ.

“ມໍຣະດົກອຸດສາຫະກຳເຄື່ອງປັ້ນດິນເຜົາທີ່ເຮັດດ້ວຍມື ຈິ່ງເຕີເຈີນ” ຕັ້ງຢູ່ນະຄອນຈິ່ງເຕີເຈີນ ທາງທິດຕາເວັນອອກສ່ຽງເໜືອ ຂອງແຂວງຈ່ຽງຊີ ປະເທດຈີນ, ປະກອບດ້ວຍອົງປະກອບມໍຣະດົກ 15 ຢ່າງ ແລະ ແຫຼ່ງມໍຣະດົກ 45 ແຫ່ງ. ພື້ນທີ່ມໍຣະດົກ ດັ່ງກ່າວກວມເອົາເນື້ອທີ່ 1,979 ເຮັກຕາ, ມີເຂດປ້ອງກັນ 5,545.7 ເຮັກຕາ, ລວມພື້ນທີ່ທັງໝົດ 7,524.7 ເຮັກຕາ.

ຄະນະກຳມະການມໍຣະດົກໂລກ ໄດ້ໃຫ້ຄວາມເຫັນວ່າ “ມໍຣະດົກອຸດສາຫະກຳເຄື່ອງປັ້ນດິນເຜົາທີ່ເຮັດດ້ວຍມື ຈິ່ງເຕີເຈີນ” ສະແດງໃຫ້ເຫັນເຖິງການເຊື່ອມໂຍງ ແລະ ນະວັດຕະກຳຂອງອຸດສາຫະກຳເຄື່ອງປັ້ນດິນເຜົາທີ່ເຮັດດ້ວຍມື ຂອງນະຄອນຈິ່ງເຕີເຈີນ ກັບເຕົາມັງກອນ ແລະ ສິລະປະການຜະລິດເຄື່ອງປັ້ນດິນເຜົາຂອງໂລກ ຕັ້ງແຕ່ສະຕະວັດທີ 10 ຫາ ສະຕະວັດທີ 19. “ເຄື່ອງປັ້ນດິນເຜົາສີຟ້າຂາວຂອງຈິ່ງເຕີເຈີນ, ໃນຖານະເປັນຕົວນຳທີ່ສຳຄັນຂອງວັດທະນະທຳຈີນ ແລະ ເປັນສັນຍາລັກທີ່ສຳຄັນຂອງສິລະປະຕາເວັນອອກ, ໄດ້ສົ່ງເສີມການສະແດງອອກຂອງອາລິຍະທຳ ແລະ ວັດທະນະທຳຈີນໄປທົ່ວໂລກ”.

### ເມືອງໜຶ່ງ ໜຶ່ງພັນປີ

ປະຫວັດສາດຂອງຈິ່ງເຕີເຈີນ ມີມາເປັນເວລາຫຼາຍພັນປີ. ການຜະລິດເຄື່ອງປັ້ນດິນເຜົາຫຼາຍກວ່າ 2,000 ປີ, ມີປະຫວັດສາດເຕົາເຜົາສຳລັບພະລາຊະວັງຫຼາຍກວ່າ 1,000 ປີ ແລະ ປະຫວັດສາດເຕົາເຜົາສຳລັບເຄື່ອງປັ້ນດິນເຜົາຂອງລາຊະວົງ ຫຼາຍກວ່າ 600 ປີ, ໃນຖານວຍໆ ເຊິ່ງເປັນໃຈກາງເຂດຕະຫຼາດຂອງເມືອງເກົ່າ, ໃນພື້ນດິນຂອງເນີນພູທາງທິດໃຕ້ຂອງສະຖານທີ່ດັ່ງກ່າວ ແມ່ນຊ້ອນກັນດ້ວຍຊັ້ນສ່ວນເຄື່ອງປັ້ນດິນເຜົາຈາກລາຊະວົງຊົ່ງ ແລະ ລາຊະວົງຍວນ (ຄ.ສ. 960-1368) ແລະ ຊັ້ນເທິງປົກຄຸມດ້ວຍຊາກຊັ້ນສ່ວນເຄື່ອງປັ້ນດິນເຜົາຈາກລາຊະວົງໝິງ ແລະ ລາຊະວົງຊິງ (ຄ.ສ. 1368-1911); ມີເຕົາເຜົາຮູບເກືອກມ້າ 17 ແຫ່ງ ຕັ້ງຢູ່ຕິດກັນ, ຢູ່ລຸ່ມນັ້ນ ມີຖານເຕົາເຜົາທີ່ເກົ່າແກ່ກວ່າ 24 ແຫ່ງ. ເມື່ອກ່ວາ 20 ປີກ່ອນ, ເພື່ອທີ່ຈະຮັກສາສະຖານທີ່ແຫ່ງນີ້ໃຫ້ສົມບູນ, ອາຄານເທດສະບານນະຄອນທີ່ສ້າງຂຶ້ນ ໄດ້ຖືກຍ້າຍອອກໄປທັງໝົດ. ຜູ້ຊ່ຽວຊານດ້ານບູຮານຄະດີ ທ່ານ ຈ່ຽງ ຈຸນຊິນ ຜູ້ທີ່ໄດ້ອຸທິດເກືອບ 40 ປີໃຫ້ກັບວຽກງານນີ້, ກ່າວຢ່າງກົງໄປກົງມາວ່າ:“ລະດັບການຄຸ້ມຄອງອະນຸລັກຮັກສາແບບນີ້ ແມ່ນຫາໄດ້ຍາກທີ່ສຸດໃນທົ່ວປະເທດ”.

ໃນຕຳລາ “Tiangong Kaiwu” ສະໄໝລາຊະວົງໝິງ ກ່າວວ່າ: “ຈາກຄວາມພະຍາຍາມ ໃນການປັ້ນດິນໜຽວຊິ້ນໜຶ່ງ, ຕ້ອງຜ່ານ 72 ຂັ້ນຕອນ ຈຶ່ງສຳເລັດ”. ຢູ່ທ້າງສອງຟາກຂອງຂົວຈູຊານ, ມີຮູບປັ້ນທອງສຳລິດ 72 ອັນ ສະແດງໃຫ້ເຫັນຂະບວນການທັງໝົດ ຕັ້ງແຕ່ການຂຸດດິນໜຽວ ໄປຈົນເຖິງການຜະລິດເຄື່ອງປັ້ນດິນເຜົາເຄືອບສຳເລັດແລ້ວ. ການແບ່ງວຽກທີ່ຊັບຊ້ອນນີ້ ມີມາກ່ອນການປະຕິວັດອຸດສາຫະກຳຕາເວັນຕົກ. ປັດຈຸບັນ, ລະບົບຕ່ອງໂສ້ອຸດສາຫະກຳເຄື່ອງປັ້ນດິນເຜົາທັງໝົດ ໃນຈິ່ງເຕີເຈີນ ມີການຈ້າງງານຫຼາຍກວ່າໜຶ່ງແສນຄົນ. ທ່ານ ຟາງ ຈຸນເວີນ ຜູ້ສືບທອດມໍຣະດົກນີ້, ກ່າວວ່າ: “ຊ່າງສີມືລຸ້ນກ່ອນໄດ້ສ້າງຕັ້ງໂຮງງານຂຶ້ນອ້ອມຮອບເຕົາເຜົາບູຮານ ເພື່ອຖ່າຍທອດທັກສະຂອງພວກເຂົາ, ເຮັດໃຫ້ໝັ້ນໃຈໄດ້ວ່າງານສີມືນີ້ຈະສືບທອດຕໍ່ໄປຈາກລຸ້ນສູ່ລຸ້ນ”.

### ໄປຕະຫຼາດໃນເມືອງ

ທ່ານ ຊາຟູຢວນ, ເກີດໃນຊຸມປີ 1990, ໄດ້ຍ້າຍທະບຽນສຳມະໂນຄົວເຮືອນຂອງລາວໄປຢູ່ນະຄອນຈິ່ງເຕີເຈີນ ຫຼັງຈາກເຮັດວຽກຢູ່ທີ່ນັ້ນ ເປັນເວລາຫຼາຍກວ່າ 10 ປີ. ລາວຈົບການສຶກສາຈາກພາກວິຈິດສິນ, ມະຫາວິທະຍາໄລວິທະຍາສາດ ແລະ ເຕັກໂນໂລຊີເຫີເປີ, ການມາທີ່ຈິ່ງເຕີເຈີນ ເພື່ອຮຽນເຮັດເຄື່ອງປັ້ນດິນເຜົາ, ໂດຍມີຄວາມມັກໃນການແຕ້ມຮູບ. “ໃນເບື້ອງຕົ້ນ, ຂ້ອຍຫາເງິນໄດ້ພຽງແຕ່ 3,000 ຢວນຕໍ່ເດືອນ. ເຖິງວ່າຈະມີເງິນຊື້ໄດ້ແຕ່ໝີ່ສຳເລັດຮູບ ແລະ ນອນເທິງພື້ນເທົ່ານັ້ນ, ແຕ່ຂ້ອຍກໍຍັງອິດທົນ”. ປັດຈຸບັນ, ຊາຟູຢວນ ເປັນເຈົ້າຂອງຍີ່ຫໍ້ເຄື່ອງປັ້ນດິນເຜົາທີ່ມີລາຍໄດ້ຕໍ່ປີ 4-5 ແສນຢວນ.

“ໄປຕະຫຼາດໃນເມືອງ” ກາຍເປັນສະເໜ່ອັນເປັນເອກະລັກຂອງເມືອງແຫ່ງນີ້. ຢູ່ນີ້ໄດ້ຮັກສາລະບົບການຜະລິດເຄື່ອງປັ້ນດິນເຜົາທີ່ເຮັດດ້ວຍມືທີ່ສົມບູນແບບທີ່ສຸດໃນໂລກ, ຕັ້ງແຕ່ການຂຶ້ນຮູບ, ການເຄືອບໄປຈົນເຖິງການແຕ້ມແຕ່ງທາສີ, ທ່ານ ສາມາດຫາຄົນແນະນຳໃນທຸກຂັ້ນຕອນ. ແມ່ນແຕ່ຜູ້ທີ່ບໍ່ມີປະສົບການກໍສາມາດເລີ່ມຕົ້ນໄດ້ງ່າຍໆ. ທ່ານສາມາດຂີ່ລົດຈັກໄຟຟ້າໄປຕາມຖະໜົນ ແລະ ຊື້ວັດສະດຸ, ເຄື່ອງມືທີ່ຈຳເປັນທັງໝົດໄດ້...

ໃນອະດີດ, ຜູ້ຄົນເດີນທາງໄປຕະຫຼາດໃນເມືອງ ເພື່ອຮຽນຮູ້ທັກສະ ແລະ ຫາລ້ຽງຊີບ; ປັດຈຸບັນ, ຜູ້ທີ່ຍ້າຍໄປເຮັດວຽກຢູ່ຈິ່ງເຕີເຈີນ ຈຳນວນຫຼາຍໄດ້ຮັບການສຶກສາທີ່ດີກ່ອນທີ່ຈະມາທີ່ນີ້. ພວກເຂົາມາ ຈິ່ງເຕີເຈີນ ແລະ ຕັ້ງຖິ່ນຖານຢູ່ທີ່ນີ້ ເພາະວ່າ ພວກເຂົາສາມາດເຮັດໃຫ້ຄວາມຝັນກາຍເປັນຈິງຜ່ານອາຊີບທີ່ພວກເຂົາຮັກໃນເມືອງນີ້ໄດ້.

### ເດີນທະເລ, ຈຳໜ່າຍໄປສູ່ທົ່ວໂລກ

ດ້ວຍລາຄາ 14,000 ຢວນຕໍ່ໜ່ວຍ, ມີຈຳນວນຈຳກັດທົ່ວໂລກພຽງ 199 ໜ່ວຍ ເຊິ່ງຂາຍໝົດທັນທີເມື່ອວາງຈຳໜ່າຍ.

ເຄື່ອງຫຼິ້ນເຊລາມິກ Pop Mart ທີ່ມີຊື່ວ່າ “ຢັນຢັນ” ໄດ້ຮັບຍອດວິວຫຼາຍລ້ານຄັ້ງຈາກວິດີໂອເປີດກ່ອງເທິງແພລດຟອມໂຊຊຽວມີເດຍຕ່າງປະເທດ. ນາງ ຊູຍວານ ຜູ້ອຳນວຍການໃຫຍ່ອາຍຸ 35 ປີຂອງບໍລິສັດ ປັ້ນດິນເຜົາ ຫງນສີ ຈິ່ງເຕີເຈີນ ກ່າວວ່າ: “ຂ້ອຍຫວັງວ່າຜູ້ຄົນຈຳນວນຫຼາຍ ຈະໄດ້ຮູ້ຈັກເຄື່ອງຫຼິ້ນເຊລາມິກ ຈິ່ງເຕີເຈີນ ທີ່ກ້າວສູ່ລະດັບໂລກ ຜ່ານເຄື່ອງຫຼິ້ນທີ່ທັນສະໄໝເຫຼົ່ານີ້”.

ໃນສະໄໝລາຊະວົງໝິງ, ຊາວໂຮນລັງ ໄດ້ສະກັດກັ້ນເຮືອການຄ້າຂອງປອກຕຸຍການ ທີ່ຂົນສົ່ງເຄື່ອງປັ້ນດິນເຜົາຈີນ, ເຮັດໃຫ້ “ເຄື່ອງປັ້ນດິນເຜົາ Kraak” ຂອງຈິ່ງເຕີເຈີນ ໂດ່ງດັງໄປທົ່ວເອີຣົບ. ໃນສະໄໝລາຊະວົງຊິງ (ຄ.ສ. 1644-1911), ເຄື່ອງປັ້ນດິນເຜົາມີເຄື່ອງໝາຍສະເພາະຫຼາຍລ້ານຊິ້ນ ໄດ້ຖືກສົ່ງອອກໄປຕາມແມ່ນ້ຳສ້າງຈຸ່ງ ທຸກປີ ຈີນເຖິງມະຫາສະໝຸດທີ່ຢູ່ຫ່າງໄກ. ນັກປະຫວັດສາດອາເມຣິກາ Robert Finley ຂຽນໄວ້ໃນໜັງສື “ເລື່ອງລາວເຄື່ອງປັ້ນດິນເຜົາສີຟ້າ-ຂາວ” ວ່າ: ນັບຕັ້ງແຕ່ການມາຮອດຂອງຊາວປອກຕຸຍການໃນປະເທດຈີນ ໃນສະຕະວັດທີ 16, ຕະຫຼອດ 3 ສະຕະວັດຕໍ່ມາ, ເຄື່ອງປັ້ນດິນເຜົາຈີນທັງໝົດ 300 ລ້ານຊິ້ນ ຖືກສົ່ງໄປຍັງເອີຣົບ, ສ່ວນໃຫຍ່ ແມ່ນຜະລິດຢູ່ຈິ່ງເຕີເຈີນ”.

ປັດຈຸບັນ, ເຄື່ອງປັ້ນດິນເຜົາຈິ່ງເຕີເຈີນ ໄດ້ຄົ້ນພົບວິທີການໃໝ່ ເພື່ອຂະຫຍາຍຕະຫຼາດໄປຕ່າງປະເທດ.

ເວລາ 1 ໂມງເຊົ້າ, ຣາເຄນ ຊາຍໜຸ່ມຈາກປະເທດຕວກກີ, ເຂົ້າມາໃນສະຕູດິໂອຖ່າຍທອດສົດຂອງນິຄົມອຸດສາຫະກຳຈິ່ງເຕີເຈີນ ເພື່ອແນະນຳຜະລິດຕະພັນໃໝ່ ໃຫ້ກັບຜູ້ບໍລິໂພກໃນຕ່າງປະເທດ. ຢູ່ເທິງໜ້າຈໍໂທລະສັບຂອງລາວ, ຂໍ້ຄວາມຈາກລູກຄ້າໃນເຂດເວລາຕ່າງໆທົ່ວໂລກ ຍັງຄົງເລື່ອນໄປມາຢ່າງຕໍ່ເນື່ອງ ເຊັ່ນ: “ກະລຸນາສະຫຼັກຊື່ຂອງຂ້ອຍໄວ້ທີ່ດ້ານລຸ່ມຂອງຈອກ” “ແຕ້ມຮູບສັດລ້ຽງຂອງຂ້ອຍໄວ້ທີ່ດ້ານໜ້າ”ແລະ ອື່ນໆ. ພັນລະຍາຂອງຣາເຄນ, ຄື ນາງ ເສິງ ລິນຢາວ ເປັນຜູ້ສືບທອດມໍຣະດົກທາງວັດທະນະທຳນາມມະທຳຂອງເຄື່ອງປັ້ນດິນເຜົາດອກໄມ້ ແລະ ນົກສີຟ້າ-ຂາວ ໃນຈິ່ງເຕີເຈີນ. ຄູ່ຜົວເມຍນີ້ ໄດ້ປະສົມປະສານວັດທະນະທຳຈີນ ແລະ ຕວກກີ ເຂົ້າໃນຜົນງານເຊລາມິກຂອງເຂົາເຈົ້າ.

ຮອດປີ 2025, ມູນຄ່າຜົນຜະລິດທັງໝົດ ຂອງອຸດສາຫະກຳເຄື່ອງປັ້ນດິນເຜົາ ຈິ່ງເຕີເຈີນ ຈະເກີນ 100 ຕື້ຢວນ ແລະ ຜະລິດຕະພັນ ຈະຖືກຈຳໜ່າຍໄປທົ່ວໂລກ.

(ສະໜອງຂໍ້ມູນໂດຍ: ອາ ລະສານ “ຈຳປາ” ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)



www.yunnangateway.com